ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້
ຫ້ອງການ

ເລກທີ: 2063-[illegible]/ຫກ

ນະຄອນຫຼວງວຽງຈັນ, ວັນທີ: 07 JUL 2023

## ໜັງສືແຈ້ງເຊີນປະມູນ

### ຈັດຊື້-ຈັດຈ້າງ ອຸປະກອນຮັບໃຊ້ວຽກງານກິງຈັກບໍລິຫານລັດ ເພື່ອສະໜອງໃຫ້ ບັນດາພະແນກ ແລະ ກອງເລຂາ ຂຶ້ນກັບຫ້ອງການ ປະຈຳປີ 2023

- ອີງຕາມ ກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ສະບັບເລກທີ 2219/ກປ ລົງວັນທີ 13 ເມສາ 2023;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີ ວ່າດ້ວຍ ອະນຸມັດໃຫ້ຫ້ອງການກະຊວງ ຈັດຊື້-ຈັດຈ້າງອຸປະກອນຮັບໃຊ້ວຽກງານ ກິງ ຈັກບໍລິຫານລັດ ນຳໃຊ້ງົບປະມານພາກ 66 ຮ່ວງຊື້ຊັບສິນບັດຄົງທີ່ (ປະຈຳປີ 2023 ) ສະບັບເລກທີ 2856/ກປ, ລົງວັນທີ 13 ມິຖຸນາ 2023.

1. ຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮັບອະນຸມັດງົບປະມານແຫ່ງລັດ ປະຈຳປີ 2023, ເພື່ອດຳເນີນການຈັດຊື້ສິນຄ້າ, ອຸປະກອນຮັບໃຊ້ວຽກງານກິງຈັກບໍລິຫານລັດປະເພດ: (ຈັກໂຟໂຕ ກ໋ອບປີ, ຈໍຕັດຕໍ່ພາບ, ໂນດບຸກ ແລະ ເຄື່ອງເກັບຖານຂໍ້ມູນ) ດ້ວຍການດຳເນີນການປະມູນເປີດກວ້າງ.
2. ຫ້ອງການ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸດທິເຫມາະສົມ ເຂົ້າຍື່ນຊອງປະມູນ ຈັດຊື້ ອຸປະກອນຮັບໃຊ້ວຽກງານ ກິງຈັກບໍລິຫານລັດ ປະເພດ (ຈັກໂຟໂຕ ກ໋ອບປີ, ຈໍຕັດຕໍ່ພາບ, ໂນດບຸກ ແລະ ເຄື່ອງເກັບຖານຂໍ້ມູນ)
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017, ແລະ ຄຳແນະນຳ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ການປະມູນນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເຫມາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງ ຕາມກົດໝາຍ ທີ່ກ່ຽວພັນກັບການສະໜອງສິນຄ້າ, ອຸປະກອນ ແລະ ການບໍລິການທີ່ຕ້ອງການ.
5. ບໍລິສັດທີ່ມີຄຸນນະວຸດທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ພະແນກການເງິນ, ຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້ (ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ທ້າວ ລັດສະໝີ ແກ້ວວັນຄຳ ໂທ: 020 5663 1188 ) ໃນໂມງລັດຖະການ ນັບແຕ່ວັນອອກແຈ້ງການເປັນຕົ້ນໄປ.
6. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດ ຕ້ອງຍື່ນໜັງສືສະເຫນີຫາ (ພະແນກການເງິນ, ຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້) ເລີ້ມແຕ່ 8:30-16:00 ໂມງ, ນັບແຕ່ມື້ອອກແຈ້ງເຊີນ ວັນທີ 10 ກໍລະກົດ 2023 ເປັນຕົ້ນໄປ, ໃນລາຄາ (ຊຸດລະ 500.000ກີບ), ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນ (ເງິນສົດ).
7. ຊອງປະມູນຕ້ອງສົ່ງທີ່ (ພະແນກການເງິນ, ຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້),ໃນເວລາ ຫລື ກ່ອນເວລາ (ເວລາ 12:00 ໂມງ ວັນທີ 11 ສິງຫາ 2023 ທີ່ກຳນົດເປັນເວລາຊ້າສຸດໃນການຍື່ນຊອງປະມູນ). ຊອງປະມູນໃດ ທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ *(ເວລາ 13:00ໂມງ, ວັນທີ 11 ສິງຫາ 2023* ທີ່ຫ້ອງການ, ກະຊວງກະສິກຳ ແລະ ປ່າໄມ້) ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ່ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.

ຫົວໜ້າຫ້ອງການ

ສົມປະໄພ ໄຊສົງຄາມ

Scanned with CamScanner